ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 6, ເຫຼັ້ມທີ 3 (Special Issue) 2020, ເລກທະບຽນ ISSN 2521-0653

# ຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີຈາກຮ້ານຄ້າໃນຕະຫຼາດເທດສະບານ ນະຄອນຫຼວງພະບາງ[1]

**ໜູພິດ ລຸນບັນດິດ[2], ວິໄລພອນ ສິມສະໝອນ ແລະ ເທບດວງຈັນ ບຸນທິເດດ[3]**
*ນັກສຶກສາປະລິນຍາໂທ ພາກວິຊາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ,*
*ມະຫາວິທະຍາໄລສຸພານຸວົງ.*

## ບົດຄັດຫຍໍ້

ແຂວງຫຼວງພະບາງ ຖືເອົາວຽກງານທ່ອງທ່ຽວເປັນປາຍແຫຼມ ທີ່ສຳຄັນຫຼາຍໃນການຂັບເຄື່ອນເສດຖະກິດຂອງປະຊາຊົນບັນດາເຜົ່າ, ການເພີ່ມຂຶ້ນຂອງນັກທ່ອງທ່ຽວ ຍ່ອມເຮັດໃຫ້ປະລິມານຄວາມຕ້ອງການດ້ານຜະລິດຕະພັນກະສິກຳເພີ່ມຂຶ້ນເຊັ່ນກັນ. ສະນັ້ນ, ຈຶ່ງເກີດການນຳໃຊ້ ປຸ໋ຍເຄມີ ແລະ ອາຫານສັດເຂົ້າໃນການຜະລິດ ໂດຍສະເພາະການປູກຜັກ, ລ້ຽງສັດ ຊຶ່ງມີການໃຊ້ປຸ໋ຍ ແລະ ຢາເຄມີເຂົ້າໃນການຜະລິດຂ້ອນຂ້າງສູງ. ປັດຈຸບັນນະໂຍບາຍລັດຖະບານຂອງລາວ ແມ່ນຊຸກຍູ້ການຜະລິດທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ປອດໄພຕໍ່ຜູ້ບໍລິໂພກ, ຊຶ່ງນະໂຍບາຍດັ່ງກ່າວເອີ້ນວ່າ: ກະສິກຳອິນຊີ ເພື່ອຜະລິດກະສິກຳອິນຊີສູ່ຕະຫຼາດ ແລະ ພາກທຸລະກິດໂຮງແຮມ ແລະ ຮ້ານອາຫານ.

ສະນັ້ນ, ການສຶກສາຄັ້ງນີ້ຈຶ່ງກຳນົດ 2 ຈຸດປະສົງໃນການສຶກສາ ຄື: (1) ສຶກສາສະພາບລວມກ່ຽວກັບການຜະລິດກະສິກຳອິນຊີໃນນະຄອນຫຼວງພະບາງ ແຂວງ ຫຼວງພະບາງ; ແລະ (2) ສຶກສາຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີຈາກຮ້ານຄ້າ ໃນຕະຫຼາດ ເທດສະບານນະຄອນຫຼວງພະບາງ. ໂດຍການສຶກສາຈາກຂໍ້ມູນຂັ້ນສອງ ແລະ ໃຊ້ແບບສອບຖາມແມ່ຄ້າໃນຕະຫຼາດ 4 ແຫ່ງ ຄື: ຕະຫຼາດ ນາວຽງຄຳ, ຕະຫຼາດຝອງສະຫວັນ, ຕະຫຼາດເຊົ້າບ້ານປ່າຂາມ ແລະ ຕະຫຼາດໂພສີ ຈຳນວນ 180 ຮ້ານ. ຜົນການສຶກສາສາມາດສະຫຼຸບໂດຍຫຍໍ້ວ່າ: ການຜະລິດກະສິກຳອິນຊີ ໃນແຂວງຫຼວງພະບາງ ໃນເບື້ອງຕົ້ນໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງສາກົນ ແລະ ອຳນາດການປົກຄອງແຂວງຢ່າງໃກ້ສິດ ຈຶ່ງສາມາດເປີດຕະຫຼາດນັດ ກະສິກຳອິນຊີຢູ່ 2 ຈຸດ ຄື: ຈຸດທີໜຶ່ງ ຕັ້ງຢູ່ ເດີ່ນພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ ເປີດຂາຍ 2 ວັນຄື: ຕອນເຊົ້າຂອງວັນພຸດ ແລະ ວັນເສົາ; ແລະ ຈຸດທີສອງ ຈັດທີ່ເດີ່ນ ສວນສາທາລະນະລ້ານຊ້າງ ເປີດຂາຍ 2 ວັນຄື: ຕອນແລງຂອງວັນຈັນ ແລະ ວັນພະຫັດປະທານ 16 ໂມງ. ແຕ່ການຜະລິດຍັງບໍ່ທັນຫຼາກຫຼາຍ ສ່ວນໃຫຍ່ເປັນເຄື່ອງປ່າຂອງດົງ ແລະ ຍັງບໍ່ທັນມີກາໝາຍ (ເຄື່ອງໝາຍ) ສິນຄ້າກະສິກຳອິນຊີ. ເຖິງແມ່ນວ່າ ຈະມີນິຕິກຳ ກາໝາຍສິນຄ້າກະສິກຳອິນຊີທີ່ຍັ້ງຢືນຄຸນນະພາບກະສິກຳອິນຊີໃນ ສປປ ລາວ ແລ້ວ. ສ່ວນຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີຂອງຮ້ານຄ້າຕາມກຸ່ມຕົວຢ່າງ ແມ່ນມີແຕ່ 42.2%, ໃນນັ້ນຮ້ານຂາຍຊີ້ນຕ້ອງການຊີ້ນໝູຫຼາຍທີ່ສຸດໃນປະລິມານ 180 ກິໂລກຣາມຕໍ່ມື້, ຮອງລົງມາແມ່ນຊີ້ນງົວ, ໄກ່, ເປັດ, ປາ ແລະ ກົບ. ສ່ວນປະເພດຜັກ ແມ່ນຜັກກາດຫຼາຍທີ່ສຸດໃນປະລິມານ 618 ກິໂລກຣາມຕໍ່ມື້ ຮອງລົງມາແມ່ນຜັກບົ້ງ, ຜັກສະຫຼັດ, ໝາກເລັ່ນ ແລະ ປະເພດເຄື່ອງຫອມເປັນຕົ້ນ.

---

[1] ***ການອ້າງອີງພາສາລາວ:***
ໜູພິດ ລຸນບັນດິດ ແລະ ຄະນະ. (2020). ຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີ ຈາກຮ້ານຄ້າໃນຕະຫຼາດເທດສະບານ ນະຄອນຫຼວງພະບາງ, *ວາລະສານວິທະຍາສາດ ມະຫາວິທະຍາໄລ ສຸພານຸວົງ, ສະບັບທີ 6 ເຫຼັ້ມທີ 3 (Special Issue), ໜ້າທີ: 1437-1448.*

***ຕິດຕໍ່ພົວພັນ***
[2] ໜູພິດ ລຸນບັນດິດ ນັກສຶກສາປະລິນຍາໂທຮຸ່ນທີ I ສາຂາບໍລິຫານທຸລະກິດ ຄະນະເສດຖະສາດ ແລະ ການທ່ອງ ທ່ຽວ ມະຫາວິທະຍາໄລສຸພານຸວົງ, ຫຼວງພະບາງ ສປປລາວ, ອີເມວ nlounbandith@ gmail.com
[3] ເທບດວງຈັນ ບຸນທິເດດ ນັກສຶກສາປະລິນຍາໂທຮຸ່ນທີ I ສາຂາບໍລິຫານທຸລະກິດ ຄະນະເສດຖະສາດ ແລະ ການທ່ອງ ທ່ຽວ ມະຫາວິທະຍາໄລ ສຸພານຸວົງ, ຫຼວງພະບາງ ສປປລາວ, ອີເມວ sinhsinh009@gmail.com

# Demand of organic products from grocery shops in Luang Prabang, Lao PDR

**Nouphit LOUNBANDITH[4], Vilayphone SOMSAMONE and Thepduangchan BOUNTHIDETH[5]**
*Master student of Business Administration, Faculty of Economics and Tourism, Souphanouvong University*

## ABSTRAC

Tourism is considered as a main economic activities for driving Luang Prabang economy. The increases of tourist arrivals also demand of agricultural production. Local farmers uses chemical fertilizer and pesticide for more productivity. In fact, the tourist prefers having organic food for two reasons, the first reason is forhealth and the second is environmental friendly purposes. The government of Lao PDR adapted the international agenda on international Federation of Agricultural Movement-IFOAM to create organic standard regulation for Lao PDR. In order to promote organic production to meet the demand of tourist consumption behavior on food and beverage when traveling to Luang Prabang.

This study focuses on two objectives, including (1) the phenomenal of organic production and farming in Luang Prabang and (2) demand of organic products from grocery shops in urban Luang Prabang. The secondary data is used for data analysis of objective one and 180 questionnaires are designed as sampling. Four markets in urban Luang Prabang are used as a case study such as Naviengkham, Pakham, Phongsavan, and Phosi market. The findings show that organic farming and production activities in LuangPrabang firstly supported by international agency and local government to operate organic farmers group. Currently there are two centers are known for organic product market fair. The first center is operated every early Wednesday and Saturday at Department of Agriculture and Forestry, and the second center is operated every Monday and Thursday around 16:00. It still needs more legislation practices on organic trade mark and improve variety of products. The demand of the grocery shops from the market shows that pork is the highest demand within amount of 180 kg in daily, beef, chicken, duck, fish and frog. For the vegetables the highest demand is the Chinese vegetable with amount of 618 Kgs per day, followed by morning glory, lettuce, tomatoes, and ingredients.

***Corresponding Author**:*
[4]*Nouphith Lounbandith, 1st Master Degree of Business Administration and Management, Faculty of Economics and Tourism, Souphanouvong University. Email: nlounbandith@ gmail.com*
[5] *Corresponding Author: Thepduangchan Bounthideth, 1st Master Degree of Business Administration and Management, Faculty of Economics and Tourism, Souphanouvong University. Email: sinhsinh009@gmail.com*

## 1. ພາກສະເໜີ

ການທ່ອງທ່ຽວ ເປັນອຸດສາຫະກຳທີ່ມີທ່າແຮງຂະຫຍາຍຕົວໄວ, ການທ່ອງທ່ຽວເປັນອຸດສາຫະກຳທີ່ສ້າງວຽກເຮັດງານ ທຳປະມານ 319 ລ້ານແຮງງານໃນທົ່ວໂລກ , ເປັນຂະແໜງການທີ່ສ້າງລາຍຮັບປະມານ 10.8% ຂອງລາຍຮັບ GDP (8.8 ຕື້ໂດລາ) ແລະ ອຸດສາຫະກຳການທ່ອງທ່ຽວສາກົນຂະຫຍາຍຕົວໃນລະດັບ 3.8% ໃນສົກປີ 2018 (WW TC, 2018) ອີງຕາມບົດລາຍງານຈາກພະແນກການພັດທະນາການທ່ອງທ່ຽວ )ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ(2019 , ລາຍງານວ່າ ໃນປີ2018 ທີ່ຜ່ານມາມີນັກທ່ອງທ່ຽວຈຳນວນ 4,187,377 ກວ່າຄົນສ້າງລາຍຮັບໂດຍສະເລ່ຍ , ເປັນເງິນ 755,342,151 ກີບ ຊຶ່ງເປັນລາຍຮັບອັນດັບທີ 4 ທັດຈາກລາຍຮັບພະລັງງານໄຟຟ້າ ແລະ ແຂວງຫຼວງພະບາງເປັນສູນລວມແຫ່ງການທ່ອງທ່ຽວທາງພາກເໜືອ ຊຶ່ງມີນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ອງທ່ຽວປະມານ 576,610 ກວ່າຄົນ ແລະ ນັກທ່ອງທ່ຽວພາຍໃນ ປະມານ 178,409 ແລະ ສ້າງລາຍຮັບສະເລ່ຍປະມານ 237,746,350 ໂດລາສະຫະລັດ2018 ໃນປີ , ໃນຫຼວງພະບາງປະກອບມີ ໂຮງແຮມ90 ແຫ່ງ ແລະ ເຮືອນພັກຈຳນວນ397 ແຫ່ງ ແລະ ຮ້ານອາຫານຈຳນວນ 300 ແຫ່ງ.

ການຂະຫຍາຍຕົວຂອງການທ່ອງທ່ຽວຍ່ອມພາໃຫ້ຄວາມຕ້ອງການ )Demand( ດ້ານຊັບພະຍາກອນ ແລະ ສະບຽງອາຫານທີ່ເພີ່ມຂຶ້ນ ໂດຍສະເພາະຜະລິດຕະພັນກະສິກຳເປັນແຫຼ່ງຊັບພະຍາກອນຫຼັກ ທີ່ຕ້ອງສະໜອງໃຫ້ພຽງພໍກັບຄວາມຕ້ອງການຂອງນັກທ່ອງທ່ຽວ ແຕ່ກໍຍັງມີຫຼາຍກໍລະນີທີ່ອຸດສາຫະກຳການທ່ອງທ່ຽວມີການເພີ່ມຂຶ້ນ ຊຶ່ງຊາວກະສິກອນຂັ້ນທ້ອງຖິ່ນບໍ່ສາມາດສະໜອງຕາມຄວາມຕ້ອງການກໍຈຳເປັນຕ້ອງນຳເຂົ້າ ບັນດາອຸປະກອນ ແລະ ເຄື່ອງອຸປະໂພກບໍລິໂພກຈາກປະເທດໃກ້ຄຽງ ເຮັດໃຫ້ຄົນທ້ອງຖິ່ນເສຍໂອກາດຈາກການພັດທະນາການທ່ອງທ່ຽວ ຫຼື ທີ່ເອີ້ນວ່າເປັນການຮົ່ວໄຫຼ ທີ່ເກີດຂຶ້ນຈາກການທ່ອງທ່ຽວ ເຊັ່ນ: ການນຳເຂົ້າສິນຄ້າຈາກຕ່າງປະເທດ ແລະ ກໍເປັນເຫດເຮັດໃຫ້ກຳໄລ ຫຼື ເງິນເດືອນຖືກໂອນໄປຍັງສູນກາງ ແລະ ຕ່າງປະເທດ. ເຖິງຢ່າງໃດກໍຕາມຈາກປະສົບການເຫັນວ່າ: ການພັດທະນາການທ່ອງທ່ຽວ ນຳມາເຊິ່ງຄວາມທັນສະໄໝ ແລະ ຄວາມຕ້ອງການດ້ານເຕັກໂນໂລຢີໃໝ່ ທີ່ຈຳເປັນຕໍ່ການດຳເນີນການ ເພື່ອສະໜອງຄວາມຕ້ອງ ການ ແລະ ການພັດທະນາພື້ນຖານໂຄງລ່າງດ້ານການທ່ອງທ່ຽວທີ່ທັນສະໄໝ ກໍເປັນການປະກອບສ່ວນເຂົ້າໃນການພັດທະນາ ສະພາບເສດຖະກິດ ແລະ ຊີວິດການເປັນຢູ່ຂອງສັງຄົມ (Goodwin, 2008)

ໃນໂລກແຫ່ງ ເທັກໂນໂລຊີທີ່ທັນສະໄໝ ການຜະລິດກະສິກຳທີ່ໃຊ້ສານເຄມີຊ່ວຍເພື່ອເພີ່ມປະສິດທິຜົນຂອງການຜະລິດໃຫ້ສາມາດສະໜອງຄວາມຕ້ອງການຂອງຕະຫຼາດ ໂດຍບໍ່ຄຳນຶງເຖິງຜົນຂ້າງຄຽງທີ່ເກີດຈາກການຜະລິດ ແລະ ການບໍລິໂພກຜະລິດຕະພັນກະສິກຳທີ່ໃຊ້ສານເຄມີ ພາໃຫ້ເກີດຜົນກະທົບຕໍ່ຊາວກະສິກອນຜູ້ໃຊ້ສານເຄມີ ຈາກການລາຍງານຂອງອົງການອາຫານ ແລະ ກະສິກຳແຫ່ງສະຫະປະຊາຊາດ ໂດຍການສຳພາດຊາວກະສິກອນຊາວກຳປູເຈຍຜູ້ໃຊ້ສານເຄມີກຳຈັດສັດຕູພືດ ຈຳນວນ 210 ຄົນກ່ຽວກັບການຜິດປົກກະຕິຂອງຮ່າງກາຍພົບວ່າ 88% ມີອາການໄດ້ຮັບສານຜິດລະດັບຕົ້ນ ໃນລະຫວ່າງ ຫຼືຫຼັງຈາກຊີດພົ່ນສານເຄມີ 35% ມີອາການໄດ້ຮັບສານຜິດລະດັບປານກາງ ແລະ 5% ໝົດສະຕິ ຊຶ່ງເປັນອາການຂອງການໄດ້ຮັບສານຜິດໃນລະດັບສູງ ແລະ ປະເທດໄທ ມີຜູ້ປ່ວຍທີ່ໄດ້ຮັບສານຜິດຈາກສານເຄມີກຳຈັດສັດຕູພືດຈາກການເຮັດວຽກ ຈຳນວນ 3,500 ຄົນ ຕໍ່ປີ (ຊິດທະໄທ ເພັດຊ່ວຍ, 2017). ນອກຈາກນັ້ນ ຍັງມີມົນລະພິດທາງອາກາດ, ມົນລະພິດທາງນ້ຳ ແລະ ສິ່ງຜົນຕໍ່ຜູ້ບໍລິໂພກນຳອີກ.

ຈາກສາເຫດນີ້ສິ່ງຜົນເຮັດໃຫ້ພຶດຕິກຳ ຜູ້ບໍລິໂພກຜະລິດຕະພັນກະສິກຳຫັນມາສົນໃຈຜະລິດຕະພັນກະສິກຳອິນຊີ ຈາກການສຶກສາເຫັນວ່າ: ພຶດຕິກຳຜູ້ບໍລິໂພກໃຫ້ຄວາມສຳຄັນຕໍ່ສຸຂະພາບ, ນອກຈາກນັ້ນ ລະບົບກະສິກຳອິນຊີຍັງຊ່ວຍປົກປັກຮັກສາສະພາບແວດລ້ອມ, ການປ້ອງກັນຜົນກະທົບຊີວະນາໆພັນ ແລະ ຍັງເປັນການຊ່ວຍສະໜັບສະໜູນເສດຖະກິດຊຸມຊົນ (Tsakiridon et al., 2007)

ສະນັ້ນ, ຜູ້ສຶກສາຈິ່ງມີຄວາມສົນໃຈສຶກສາສຶກສາສະພາບລວມກ່ຽວກັບການຜະລິດກະສິກຳອິນຊີ ແລະ ຄວາມຕ້ອງການ ຜະລິດຕະພັນກະສິກຳອິນຊີຈາກຮ້ານຄ້າໃນຕະຫຼາດ ເທດສະບານນະຄອນຫຼວງພະບາງ ແຂວງຫຼວງພະບາງ ການສົ່ງເສີມການຕະຫຼາດກະສິກຳອິນຊີຂອງປະຊາຊົນ ທີ່ເປັນແນວທາງໜຶ່ງ ທີ່ຊາວກະສິກອນຈະໄດ້ຮັບຜົນປະໂຫຍດຈາກການພັດທະນາການທ່ອງທ່ຽວ, ຂໍ້ມູນຄວາມຕ້ອງການດ້ານຕະຫຼາດ ຈະເປັນບ່ອນອີງໃນການສົ່ງເສີມການປູກ ແລະ ການລ້ຽງໃນການຜະລິດກະສິກຳທີ່

ມີຕະຫຼາດຮອງຮັບຢ່າງແນ່ນອນ ແລະ ຈະກາຍເປັນກິດຈະກຳການທ່ອງທ່ຽວກະສິກຳນຳຕື່ມ.

**ຈຸດປະສົງການສຶກສາ**

ໃນການສຶກສາຄັ້ງນີ້ ຜູ້ສຶກສາແມ່ນໄດ້ສຶກສາກຳນົດເອົາຈຸດປະສົງຂອງການສຶກສາຢູ່ 3 ຈຸດປະສົງດັ່ງນີ້:

1) ສຶກສາສະພາບລວມການຜະລິດ ຜະລິດຕະພັນກະສິກຳອິນຊີໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ;
2) ສຶກສາຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີ ຈາກຮ້ານຄ້າໃນຕະຫຼາດ ເທດສະບານນະຄອນຫຼວງພະບາງ.
3) ສຶກສາແນວທາງການສົ່ງເສີມ ຜະລິດຕະພັນກະສິກຳອິນຊີໃນນະຄອນຫຼວງພະບາງ

**ທົບທວນທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ**

- **ທິດສະດີ ຄວາມຕ້ອງການ ດ້ານຜະລິດຕະພັນກະສິກຳອິນຊີ**

Abraham Maslow(1943) ໄດ້ອະທິບາຍວ່າ: ເປັນຫຍັງຄົນເຮົາຈຶ່ງມີຄວາມຕ້ອງການສະເພາະໃດໜຶ່ງ ແລະ ເວລາໃດໜຶ່ງທ່ານໄດ້ອີງໃສ່ທິດສະດີທີ່ວ່າ ,: ຄວາມຕ້ອງການຂອງມະນຸດ ແມ່ນມີລະດັບຈາກລະດັບຂັ້ນຕໍ່າຫາສູງ ຫຼື ສິ່ງທີ່ຈຳເປັນກວ່າໝູ່ ໂດຍມະນຸດ ຈະພະຍາຍາມຕອບສະໜອງຄວາມຕ້ອງການທີ່ສູງກວ່າທ່ານ , Maslow ໄດ້ກຳນົດຄວາມຕ້ອງການຕ່າງໆ ຈາກຕ່ຳຫາສູງ ຊຶ່ງປະກອບມີ ຄວາມຕ້ອງການທາງດ້ານຮ່າງກາຍ, ຄວາມຕ້ອງການທາງດ້ານຄວາມປອດໄພ, ຄວາມຕ້ອງການທາງດ້ານສັງຄົມ, ຄວາມຕ້ອງການຄວາມນັບຖື ແລະ ສະຖານະພາບທາງສັງຄົມ, ຄວາມຕ້ອງການບັນລຸເປົ້າໝາຍສູງສຸດໃນຊີວິດ ແຕ່ການສຶກສາຄັ້ງນີ້ ແມ່ນຈະນຳເອົາຄວາມຕ້ອງການທາງດ້ານຄວາມປອດໄພ ພາຍຫຼັງທີ່ຮ່າງກາຍຖືກຕອບສະໜອງໃນສິ່ງທີ່ຈຳເປັນແລ້ວ ຄົນເຮົາຈະຄິດໄປເຖິງສິ່ງທີ່ປອດໄພທາງສຸຂະພາບ, ສິ່ງແວດລ້ອມ ແລະ ຊີວະນາໆ ພັນ ສະນັ້ນ, ຄວາມຕ້ອງການອາຫານ ແລະ ຜະລິດຕະພັນກະສິກຳອິນຊີ ຈຶ່ງກາຍເປັນທີ່ນິຍົມກັນໃນຕະຫຼາດກະສິກຳເພື່ອຮັບ ປະກັນຄວາມປອດໄພທາງດ້ານສຸຂະພາບ ແລະ ສິ່ງແວດລ້ອມ

(Ueasangkomsatea and Santiteerakulb, 2016) ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ ຫຼື ຜະລິດຕະພັນສີຂຽວ, ຊຶ່ງເປັນຮູບແບບ ອາຫານປອດສານພິດ ທີ່ຖືກກຳນົດວ່າເປັນຜະລິດຕະພັນທີ່ພິເສດ, ຜະລິດຈາກວັດຖຸດິບທີ່ຜະລິດ ແລະ ຫຸ້ມຫໍ່ທີ່ເປັນມິດກັບສິ່ງແວດລ້ອມ. ນອກຈາກນັ້ນ ອາຫານຂຽວຍັງໝາຍເຖິງການຜະລິດກະສິກຳທີ່ປູກ, ລັກສະນະສາມາດນຳກັບມາໃຊ້ໃໝ່ ຫຼື ນຳໃຊ້ຄືນໃໝ່, ມີສ່ວນປະກອບວັດຖຸດິບທຳມະຊາດ ຫຼື ເປັນຜະລິດຕະພັນທີ່ຜະລິດຄືນໃໝ່, ບໍ່ເປັນການສ້າງມົນລະພິດຕໍ່ສະພາບແວດລ້ອມ ແລະ ບໍ່ທົດລອງກ່ຽວກັບສັດ

(Annunziata and Vecchio, 2015) ຜະລິດກະສິກຳອິນຊີ ແມ່ນລະບົບການຜະລິດທີ່ມີຜົນຕໍ່ຄຸນນະພາບຂອງດິນ, ລະບົບນິເວດ ແລະ ປະຊາຊົນ, ການສຶກສານີ້ໄດ້ຢືນຢັນວ່າ: ຜູ້ບໍລິໂພກຊື້ອາຫານປອດສານພິດ ເພາະວ່າມັນຖືກຮັບຮູ້ວ່າມີສຸຂະພາບດີ ຫຼື ສົດກວ່າຜະລິດຕະພັນທຳມະດາ ແຕ່ຍັງເປັນມິດກັບສິ່ງແວດລ້ອມ ແລະ ສະໜັບສະໜູນເສດຖະກິດທ້ອງຖິ່ນ ມາຮອດປັດຈຸບັນ ລະບົບການຜະລິດສະບຽງອາຫານແມ່ນບໍ່ມີຄວາມຍືນຍົງ ແລະ ປະນີປະນອມຄວາມສາມາດໃນການຜະລິດອາຫານໃນອະນາຄົດ. ເພາະສະນັ້ນ, ລະບົບອາຫານຕ້ອງໄດ້ຮັບການປັບປຸງ ເພື່ອຮັບປະກັນປະສິດທິພາບຂອງຊັບພະຍາກອນເພື່ອຕອບສະໜອງຄວາມຕ້ອງການດ້ານສະບຽງອາຫານ ແລະ ໂພຊະນາການທີ່ນັບມື້ນັບເພີ່ມຂຶ້ນ, ຜູ້ບໍລິໂພກກະສິກຳອິນຊີມີທ່າອ່ຽງທີ່ສຳຄັນໃນການບໍລິໂພກອາຫານແບບຍືນຍົງ.

- **ແນວຄວາມຄິດ ຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີ**

ການຈັດຕັ້ງປະຕິບັດຂອງໂຄງການ SUMERNET (2017) ລາຍງານວ່າ: ການຜະລິດກະສິກຳສະອາດໃນເນື້ອທີ່ 4.02 ເຮັກຕາ ແລະ ສາມາດເກັບກ່ຽວຜົນຜະລິດໄດ້ 9,288 ກິໂລກຼາມໃນປີ 2015. ຊາວກະສິກອນທັງສອງບ້ານຄື: ບ້ານດົງຍາງ ແລະ ບ້ານ ໂພນທັນ ໄດ້ມີຄວາມພໍໃຈຫຼາຍຕໍ່ກັບການຜະລິດກະສິກຳສະອາດ ໂດຍສະເພາະການຜະລິດທີ່ໃຊ້ຕົ້ນ ທຶນຕໍ່າ, ນຳໃຊ້ວັດສະດຸທີ່ມີໃນທ້ອງຖິ່ນເຂົ້າໃນການຜະລິດເຊັ່ນ: ປຸ໋ຍຄອກ, ເສດເຟືອງ, ເສດພືດຕ່າງໆ ເຂົ້າໃນການຜະລິດຝຸ່ນ ບົ່ມ. ນອກຈາກນັ້ນ ຜົນຜະລິດກໍບໍ່ໄດ້ນຳໃຊ້ຢາປາບສັດຕູພືດ, ຝຸ່ນເຄມີ ແລະ ຢາເຄມີ ຊຶ່ງມີຄວາມປອດໄພຕໍ່ຜູ້ບໍລິໂພກ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ຍັງຊ່ວຍປັບປຸງຄຸນນະພາບຂອງດິນໃຫ້ຄ່ອຍໆດີຂຶ້ນ ໂດຍໄດ້ຮັບການຝຶກອົບຮົມຂັ້ນຕອນການຜະລິດຝຸ່ນຄອກ, ຝຸ່ນບົ່ມ ແລະ ນ້ຳສະກັດຊີວະພາບຈາກຫ້ອງການກະສິກຳເມືອງ.

ໃນສະໄໝປະຈຸບັນຜູ້ບໍລິໂພກມີທ່າອ່ຽງທີ່ຈະຊື້ອາຫານທີ່ມີຄຸນນະພາບສູງເພື່ອຄຸນນະພາບຊີວິດທີ່ດີ, ອາຫານທີ່ມີຄຸນນະພາບຊຶ່ງປະກອບມີ ຄວາມປອດໄພຂອງອາຫານ ແລະ ຮັບປະກັນຄວາມຍືນຍົງ. ອີກປະການໜຶ່ງກໍຍ້ອນຄວາມສົນໃຈໃນການຕອບສະໜອງຜະລິດຕະພັນທີ່ຮັບປະກັນ ຕໍ່ຄວາມປອດໄພດ້ານສະບຽງອາຫານ, ຄວາມກັງວົນກ່ຽວກັບສຸຂະພາບຂອງມະນຸດ, ການພິຈາລະນາດ້ານສະຫວັດດີການຂອງລັດ ແລະ ຄວາມກັງວົນດ້ານສິ່ງແວດລ້ອມ ແມ່ນມີການຂະຫຍາຍ ຕົວຢ່າງກວ້າງຂວາງ.

## 2. ວິທີການຄົ້ນຄວ້າ

### ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ເຂົ້າໃນການສຶກສານີ້ ແມ່ນກໍານົດເອົາຮ້ານຄ້າຂາຍຜັກ, ພືດ ,ໝາກໄມ້, ຊີ້ນ ແລະ ປາໃນຕະຫຼາດ ນາວຽງຄໍາ, ຕະຫຼາດເຊົ້າທ່າເຮືອ, ຕະຫຼາດໂພສີ ແລະ ຕະຫຼາດຟອງສະຫວັນ ເນື່ອງຈາກເປັນຕະຫຼາດຫຼັກທີ່ໄດ້ຮັບຄວາມນິຍົມໃນເທດສະບານນະຄອນຫຼວງພະບາງ.

ຈາກການສໍາຫຼວດຕົວຈິງຕາມກຸ່ມຮ້ານຄ້າປະຊາກອນ ເຫັນວ່າມີຮ້ານຄ້າຈໍານວນດັ່ງນີ້: ຮ້ານຂາຍພືດຜັກ ຈໍານວນ 211 ຮ້ານ, ຮ້ານຂາຍຊີ້ນແຍກເປັນ ຮ້ານຂາຍຊີ້ນໝູ, ຄວາຍ ຈໍານວນ 79 ຮ້ານ, ຮ້ານຂາຍສັດປີກ ຈໍານວນ 17 ຮ້ານ ແລະ ຮ້ານຂາຍສັດນໍ້າຈໍານວນ 17 ຮ້ານ ລວມທັງໝົດ 324 ຮ້ານ. ຜູ້ວິໄຈໄດ້ໃຊ້ສູດຄິດໄລ່ເພື່ອຊອກຫາຕົວຢ່າງຕາມສູດຂອງ ຢາມາເນ່ (Yamane) ເຊິ່ງມີສູດຊອກຫາກຸ່ມຕົວຢ່າງຄື:

$$n = \frac{\mathrm{N}}{1 + \mathrm{Ne}^2}$$

n = ຈໍານວນກຸ່ມຕົວຢ່າງທີ່ຕ້ອງການ

N =ຈໍານວນກຸ່ມປະຊາກອນທັງໝົດ

e =ຄ່າຄວາມຄາດເຄື່ອນທີ່ຍອມຮັບໃຫ້ເກີດຂຶ້ນແມ່ນ 5% = 0.05

ແທນສູດ $n = \frac{N}{1+Ne^2}$

ກຸ່ມຕົວຢ່າງ ແມ່ນສຸ່ມຕາມຈໍານວນຕົວຈິງໃນຕອນເກັບຂໍ້ມູນ ເຊິ່ງແມ່ນຮ້ານຄ້າຕາມຕະຫຼາດ ໃນເທດສະບານ ນະຄອນຫຼວງພະບາງ ຈໍານວນ 180 ຮ້ານ.

### ຂອບເຂດການສຶກສາ

ການສຶກສາໃນຄັ້ງນີ້ ແມ່ນການສໍາຫລວດຄວາມຕ້ອງການດ້ານຜະລິດຕະພັນກະສິກໍາອິນຊີ ໄດ້ກໍານົດຂອບເຂດການສຶກສາຜະລິດຕະພັນກະສິກໍາ ເປັນ 2 ໝວດໃຫຍ່ ຄື ປະເພດ ພືດມີ ຜັກ, ໝາກໄມ້ ແລະ ປະເພດສັດຄື ໝູ, ງົວ, ຄວາຍ, ເປັດ, ໄກ່, ປາ, ກົບຈາກຕະຫລາດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ.

### ວິທີການດໍາເນີນການສຶກສາ

ການດໍາເນີນການສຶກສາໃນຄັ້ງນີ້ ແມ່ນໃຊ້ວິທີການສຶກສາແບບປະສົມປະສານ ເຊີງປະລິມານ ແລະ ເຊີງຄຸນນະພາບ ໂດຍນໍາໃຊ້ແບບສອບຖາມລົງເກັບກໍາຂໍ້ມູນຕົວຈິງ ການຢາຍແບບສອບຖາມການລົງສໍາພາດກັບ , ວິຊາການກ ,ຜູ້ຈັດການຟາມ ,ຮ້ານຄ້າະສິກໍາ ສະມາຄົມ , ຫຼືກຸ່ມກະສິກໍາອິນຊີ ຊຶ່ງໃຊ້ແບບສໍາພາດທີ່ມີໂຄງສ້າງ , ເຄື່ອງບັນທຶກສຽງ ,ບິກ ,ປຶ້ມ ເພື່ອຄວາມລະອຽດໃນການເກັບຂໍ້ມູນ ແລະ ຍັງໄດ້ນໍາໃຊ້, ຂໍ້ມູນທີ່ໄດ້ຈາກການເກັບລວບລວມຂໍ້ມູນຈາກບັນດາປຶ້ມຕໍາລາແບບຮຽນນິຕິກໍາ , ,ບົດວິທະຍານິພົນ ,ຂໍ້ມູນຈາກບົດໂຄງການຈົບຊັ້ນ , ການທົບທວນຄວາມຄິດ ແລະ ທິດສະດີທີ່ກ່ຽວຂ້ອງທິດສະ . ດີ ແລະ ບົດວິໄຈທີ່ກ່ຽວຂ້ອງ ມາເປັນບ່ອນອີງໃນການສ້າງແບບສໍາພາດໃຫ້ກົງກັບຈຸດປະສົງ.

### ການວິເຄາະຂໍ້ມູນ

ໃນການວິເຄາະຂໍ້ມູນ ດ້ານປະລິມານ ຫຼັງຈາກເກັບລວບລວມຂໍ້ມູນໃນແບບສອບຖາມແລ້ວນໍາມາວິເຄາະຜ່ານໂປຣແກມ ຄອມພິວເຕີ (Excel) ແລະ ຈັດລຽງຂໍ້ມູນທີ່ໄດ້ມາຕາມລໍາດັບ. ສະຖິຕິທີ່ໃຊ້ໃນການພັນລະນາຂໍ້ມູນແມ່ນຈໍານວນ ແລະ ຄ່າເປີເຊັນ.

ສ່ວນຂໍ້ມູນທາງຄຸນນະພາບ ໂດຍການສໍາພາດ ຂໍ້ມູນທີ່ໄດ້ແມ່ນນໍາໃຊ້ວິທີລວບລວມຈົນຂໍ້ມູນມີຄວາມອີ່ມຕົວ (Saturated Data) ຈຶ່ງຍຸດຕິການສໍາພາດ. ແລະ ໃຊ້ຮູບແບບການພັນລະນາວິເຄາະ (Descriptive Analysis) ໃນການອະທິບາຍຜົນທີ່ໄດ້ຕາມສະພາບຕົວຈິງທີ່ກົງກັບຈຸດປະສົງ

## 3. ຜົນໄດ້ຮັບ

ຈາກການສຶກສາຄົ້ນຄວ້າສາມາດສັງລວມຜົນໄດ້ຮັບຈາກການສຶກສາຄັ້ງນີ້ຕາມຈຸດປະສົງທີ່ຕັ້ງໄວ້ໃນເບື້ອງຕົ້ນສອງຈຸດປະສົງ ຄື: (1) ສະພາບລວມຜະລິດຕະພັນກະສິກໍາອິນຊີ ໃນນະຄອນຫຼວງພະບາງ ແຂວງ ຫຼວງພະບາງ ແລະ (2) ຄວາມຕ້ອງການດ້ານຜະລິດຕະພັນກະສິກໍາອິນຊີ ຈາກຮ້ານຄ້າໃນຕະຫຼາດເທດສະບານ ນະຄອນຫຼວງພະບາງ.

### 3.1 ສະພາບລວມການຜະລິດ ຂອງຜະລິດຕະພັນກະສິກໍາອິນຊີໃນນະຄອນຫຼວງພະບາງ ແຂວງ ຫຼວງພະບາງ.

ການຜະລິດກະສິກໍາ ອິນຊີ (ກະຊວງກະສິກໍາ ແລະ ປ່າໄມ້, 2011) ແມ່ນເປັນສ່ວນໜຶ່ງໃນການປະຕິບັດເນື້ອໃນມະຕິ 8 ສະໄໝທີ VII ຂອງກົມການເມືອງສູນ

ກາງພັກວ່າດ້ວຍກະສິກຳສະອາດ ທີ່ສອດຄ່ອງກັບທ່າແຮງບົ່ມຊ້ອນທີ່ ສປປ ລາວ ຍັງມີຊັບພະຍາກອນທຳມະຊາດ, ອາກາດ, ແຫຼ່ງນ້ຳ ທີ່ຍັງບໍ່ທັນມີສານເຄມີເໝືອນດັ່ງປະເທດອື່ນ ແລະ ເພື່ອເຮັດໃຫ້ປະຊາຊົນ ບັນດາເຜົ່າສາມາດກຳຫຼັກການກະສິກຳສະອາດຢ່າງເລິກເຊິ່ງ. ສະນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງກຳນົດ ມາດຕະຖານກະສິກຳອິນຊີ ສະບັບເລກທີ 1666/ປຜ.ກປ, ລົງວັນທີ 30 ທັນວາ 2005 ທີ່ກຳນົດມາດຕະຖານກະສິກຳອິນຊີໃນ ສປປ ລາວ ໂດຍອີງຕາມມາດຕະຖານກະສິກຳອິນຊີສາກົນ ( International Federation of Agricultural Movement -IFOAM) ຊຶ່ງກວມເອົາການປະຕິບັດຫຼັງການເກັບກ່ຽວ ແລະ ການປຸງແຕ່ງຜະລິດຕະພັນ, ການເກັບກ່ຽວຜົນຜະລິດ. ສະນັ້ນ, ການຜະລິດກະສິກຳອິນຊີ ເປັນກະສິກຳທຳມະຊາດ ແລະ ນິເວດກະສິກຳ ໂດຍມີຫຼັກການ ແລະ ເປົ້າໝາຍທີ່ສຳຄັນປະກອບມີຄື:

1. ສ້າງລະບົບການຜະລິດ ໄປສູ່ແນວທາງກະສິກຳແບບປະສົມປະສານທີ່ມີທັງການປູກ ແລະ ການລ້ຽງ;
2. ສ້າງລະບົບການຜະລິດທີ່ເພິ່ງພາ ແລະ ກຸ້ມຕົນເອງທາງດ້ານອິນຊີວັດຖຸ ແລະ ທາດອາຫານຢູ່ໃນນາ ແລະ ສວນ;
3. ຟື້ນຟູ ແລະ ຮັກສາຄວາມສົມດູນຂອງດິນດ້ວຍອິນຊີວັດຖຸເຊັ່ນ: ຝຸ່ນຄອກ, ຝຸ່ນບົ່ມ ແລະ ຝຸ່ນຂຽວຢ່າງຕໍ່ເນື່ອງ;
4. ຮັກສາຄວາມສົມດູນ ຂອງລະບົບນິເວດໃນຟາມ ແລະ ຄວາມຍືນຍົງຂອງລະບົບນິເວດໂດຍລວມ;
5. ຫຼີກເວັ້ນ ແລະ ປ້ອງກັນການກໍ່ໃຫ້ເກີດມົນລະພິດຕໍ່ສິ່ງແວດລ້ອມ;
6. ສະໜັບສະໜູນລະບົບການຜະລິດ ແລະ ຂະບວນການຈັດການຢ່າງເປັນທຳຕໍ່ທຸກຝ່າຍ;
7. ຍຶດໝັ້ນຫຼັກການປະຕິບັດຫຼັງການເກັບກ່ຽວ ແລະ ການແປຮູບທີ່ເປັນວິທີທຳມະຊາດ, ປະຢັດພະລັງງານ ແລະ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດ.

ນອກຈາກນັ້ນ ສປປ ລາວ ຍັງພະຍາຍາມຜັກດັນໃນການສ້າງກາໝາຍສິນຄ້າກະສິກຳອິນຊີ ເພື່ອຍົກສູງຄຸນນະພາບກະສິກຳອິນຊີໃນ ສປປ ລາວ ແລະ ກາຈ້ຳຢັ້ງຢືນມາດຕະຖານຂອງຜະລິດຕະພັນກະສິກຳອິນຊີ ຂອງ ສປປ ລາວ (Greennet, 2009).

ທາງອຳນາດການປົກຄອງແຂວງ ຫຼວງພະບາງ ໂດຍສະເພາະພະແນກກະສິກຳ ແຂວງ ລິເລີ່ມໃນການສ້າງກຸ່ມກະ ສິກຳອິນຊີ ແຂວງ ຫຼວງພະບາງ ໄດ້ຮັບການສະໜັບສະໜູນຈາກໂຄງການຝາວ ໃນປີ 2004-2009 ຊຶ່ງເປັນໄລຍະປັບປຽນ ສ້າງຕັ້ງກຸ່ມຂຶ້ນຢູ່ແຕ່ລະບ້ານ. ທ້າຍປີ 2011-2012 ແມ່ນໂຄງການຕາບີ ສານຕໍ່ເປັນໄລຍະ 2 ຊຶ່ງກວມເອົາ 5 ຕົວເມືອງ ຄື:

- ກຸ່ມເມືອງປາກອູມີ: ບ້ານ ໂພນໂຮມ, ບ້ານ ຫາດມາດ;
- ກຸ່ມເມືອງໂພນໄຊມີ: ບ້ານ ນ້ຳອອກບໍ່;
- ກຸ່ມນະຄອນ ຫຼວງພະບາງມີ: ບ້ານ ປົ່ງຫວ້ານ, ບ້ານ ນາເດືອຍ, ບ້ານ ນາໄຊ, ບ້ານ ຊຽງລ້ອມ;
- ກຸ່ມເມືອງຈອມເພັດມີ: ບ້ານ ຈິກ, ບ້ານ ເກືອບ;
- ກຸ່ມເມືອງຊຽງເງິນມີ: ບ້ານ ລ້ອງອໍ້, ບ້ານ ສວນຫຼວງ, ບ້ານ ມູດ, ບ້ານ ປາກແວດ.

ປີ 2012-2013 ໂຄງການເຊັກໂກ ສິ່ງເສີມການພັດທະນາທ່ອງທ່ຽວສີຂຽວຍືນຍົງ. ສະມາຄົມກະສິກຳອິນຊີ ແຂວງ ຫຼວງພະບາງ ໄດ້ສ້າງຕັ້ງຂຶ້ນໃນເດືອນ ພະຈິກ ( 11 ) ປີ 2014 ມີຄະນະບໍລິຫານງານ 6 ທ່ານ, ມີສະມາຊິກເຂົ້າຮ່ວມຈາກ 12 ບ້ານຂອງສອງຕົວເມືອງ ຄື: ນະຄອນຫຼວງພະບາງ ປະກອບມີ: ບ້ານ ນາໄຊ, ບ້ານ ປົ່ງຫວ້ານ, ບ້ານ ຊຽງລ້ອມ, ບ້ານ ນາເດືອຍ, ບ້ານ ນາຊ່າວ, ບ້ານ ເມືອງຂາຍ ແລະ ເມືອງຊຽງເງິນ ປະກອບມີ: ບ້ານ ລ້ອງອໍ້, ບ້ານ ສວນຫຼວງ, ບ້ານ ມູດ, ບ້ານ ປາກແວດ, ບ້ານ ແອນສະຫວັນ, ບ້ານ ກົ່ວຕາລຸນ. ມີສະມາຊິກທັງໝົດ 117 ຄອບຄົວ. ໄລຍະ 2 ຂອງໂຄງການພັດທະນາການທ່ອງທ່ຽວແບບຍືນຍົງ ໄດ້ສ້າງສູນກະສິກຳອິນຊີຂຶ້ນ 1 ບ່ອນ ຄື : ບ້ານ ນາຊ່າວ (ທາງໄປຕາດກວາງຊີ). ປະຈຸບັນມີສະມາຊິກສະມາຄົມ ແຂວງ ຫຼວງພະບາງມີ 32 ຄອບຄົວ ທີ່ລົງທະບຽນຢ່າງຖືກຕ້ອງຕາມກົດໝາຍ, ຕະຫຼາດກະສິກຳອິນຊີ ຍ້າຍຈາກຕະຫຼາດ ຟອງສະຫວັນມາຕັ້ງຢູ່ພະແນກກະສິກຳແຂວງ ປີ 2013 ຈົນເຖິງປະຈຸບັນເປີດຂາຍ 1 ອາທິດ ມີ 2 ຄັ້ງຄື: ຕອນເຊົ້າ ວັນພຸດ ແລະ ວັນເສົາ. ເດືອນ ມິຖຸນາ ປີ 2018 ໄດ້ເປີດຕະຫຼາດຂຶ້ນອີກ 1 ບ່ອນຄື: ຕະຫຼາດລ້ານຊ້າງ ເປີດຂາຍ 2 ວັນຄື: ຕອນແລງຂອງວັນຈັນ ແລະ ວັນພະຫັດ. ປັດຈຸບັນສະມາຄົມເປີດຂາຍຜັກອິນຊີ ອາທິດໜຶ່ງ 4 ຄັ້ງ, ຂາຍ 16 ຄັ້ງ ຢູ່ນະຄອນຫຼວງພະບາງ (ພະແນກກະສິກຳ ແລະ ປ່າໄມ້ແຂວງ ຫຼວງພະບາງ, 2020).

**3.2 ຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີ ຈາກຮ້ານຄ້າ ໃນຕະຫຼາດ ເທດສະບານນະຄອນຫຼວງພະບາງ.**

ການວິເຄາະຄວາມຕ້ອງການຄັ້ງນີ້ ຜູ້ສຶກສາໄດ້ກຳນົດເອົາ 4 ຕະຫຼາດຢູ່ໃນນະຄອນຫຼວງພະບາງມາສຶກສາ ຄື: ຕະຫຼາດໂພສີ, ຕະຫຼາດນາວຽງຄຳ, ຕະຫຼາດປ່າຂາມ ແລະ ຕະຫຼາດຟອງສະຫວັນ ຊຶ່ງໄດ້ສຸ່ມເອົາຈຳນວນຮ້ານຂາຍຊີ້ນທັງ ໝົດ 44 ຮ້ານຄື: ຕະຫລາດໂພສີ 32 ຮ້ານ, ຕະຫຼາດນາວຽງຄຳ 6 ຮ້ານ, ຕະຫຼາດປ່າຂາມ 4 ຮ້ານ ແລະ ຕະຫຼາດຟອງສະຫວັນ 2 ຮ້ານ; ຮ້ານຂາຍໄກ່-ເປັດ ຈຳນວນ 9 ຮ້ານ ຊຶ່ງແຕ່ລະຕະຫຼາດມີຄື: ຕະຫລາດໂພສີ 2 ຮ້ານ, ຕະຫຼາດນາວຽງຄຳ 3 ຮ້ານ, ຕະຫຼາດປ່າຂາມ 2 ຮ້ານ ແລະ ຕະຫຼາດຟອງສະຫວັນ 2 ຮ້ານ, ຮ້ານຂາຍຊີ້ນປາ-ກົບຈຳນວນ 10 ຮ້ານ, ຕະຫລາດໂພສີ 4 ຮ້ານ, ຕະຫຼາດນາວຽງຄຳ 3 ຮ້ານ, ຕະຫຼາດປ່າຂາມ 2 ຮ້ານ ແລະ ຕະຫຼາດຟອງສະຫວັນ 1 ຮ້ານ ແລະ ຮ້ານຂາຍຜັກສົດຈຳນວນ 117 ຮ້ານ ໃນນີ້ຕະຫລາດໂພສີ 67 ຮ້ານ, ຕະຫຼາດນາວຽງຄຳ 22 ຮ້ານ, ຕະຫຼາດປ່າຂາມ 19 ຮ້ານ ແລະ ຕະຫຼາດຟອງສະຫວັນ 9 ຮ້ານ. ຜົນການສຶກສາສາມາດສະຫຼຸບໄດ້ດັ່ງຕາຕະລາງທີ 1: ສະແດງເຖິງຮ້ານທີ່ຊື້ມາຂາຍ ແລະ ຜະລິດຂາຍເອງ.

ຈາກຜົນການວິເຄາະໃນຕາຕະລາງ 1 ພົບວ່າຈຳນວນຮ້ານທັງໝົດທີ່ນຳມາສຶກສາຈຳນວນ 180 ຮ້ານເຫັນວ່າ: 145 ຮ້ານ ແມ່ນຊື້ມາຂາຍ ຊຶ່ງກວມ 80.6%, ສຳລັບຮ້ານທີ່ບໍ່ໄດ້ຊື້ມາຂາຍ ຈະເປັນການຜະລິດມາຂາຍເອງ ມີຈຳນວນ 35 ຮ້ານ ກວມ 19.4%.

ຜົນການວິເຄາະໃນຕາຕະລາງ 2 ພົບວ່າ 36 ຮ້ານ ແມ່ນຮັບຊື້ມາຈາກພໍ່ຄ້າຂາຍສົ່ງທີ່ຕະຫຼາດໂພສີ ກວມ 20%, ຮ້ານທີ່ຮັບຊື້ມາຈາກພໍ່ຄ້າ-ແມ່ຄ້າທີ່ສົ່ງເຖິງຮ້ານ ມີຈຳນວນ 97 ຮ້ານ ກວມ 53.9%, ຮ້ານຂາຍເຄື່ອງທີ່ໄປຊື້ຢູ່ຟາມຜູ້ຜະລິດ ຊຶ່ງເປັນຮ້ານຂາຍໄກ່ ແລະ ເປັດ ມີຈຳນວນ 2 ຮ້ານ ກວມ 1.1%, ຮ້ານຂາຍເຄື່ອງຜະລິດກະສິກຳ ທີ່ຜະລິດເອງມາຂາຍ ມີຈຳນວນ 35 ຮ້ານ ກວມ 19.4% ແລະ ຮ້ານທີ່ໄປຊື້ຢູ່ໂຮງຂ້າສັດ ຊຶ່ງເປັນຮ້ານຂາຍຊີ້ນ ເຊັ່ນ: ຊີ້ນໝູ, ຊີ້ນງົວ ແລະ ຊີ້ນຄວາຍມີຈຳນວນ 10 ຮ້ານ ກວມ 5.6%.

ຜົນການວິເຄາະໃນຕາຕະລາງທີ 3 ພົບວ່າ ຮ້ານທີ່ມີຄວາມສົນໃຈຕໍ່ຜົນຜະລິດກະສິກຳອິນຊີ ແມ່ນມີຈຳນວນ 76 ຮ້ານກວມ 42.2%, ສຳລັບຮ້ານທີ່ບໍ່ສົນໃຈຕໍ່ກັບຜົນຜະລິດກະສິກຳອິນຊີ ແມ່ນມີຈຳນວນ 104 ຮ້ານ ກວມ 57.8%.

ຜົນການວິເຄາະໃນຕາຕະລາງທີ 4 ເຫັນວ່າ ມີ 76 ຮ້ານທີ່ຕ້ອງການຊື້ຜົນຜະລິດກະສິກຳອິນຊີຊຶ່ງກວມ 42.2%, ແລະ ມີ 104 ຮ້ານ ແມ່ນບໍ່ຕ້ອງການຊື້ ກວມ 57.8%.

ເຫດຜົນຮ້ານທີ່ບໍ່ຕ້ອງການຊື້ຜົນຜະລິດກະສິກຳອິນຊີຈຳນວນ 104 ຮ້ານນັ້ນ ຜົນການວິເຄາະພົບວ່າ ມີ 29 ຮ້ານ ມີສາຂາປະຈຳ ທີ່ມາສົ່ງຜົນຜະລິດກະສິກຳທົ່ວໄປທີ່ຮ້ານຕົນເອງ ຊຶ່ງກວມ 27.9%, ເຫດທີ່ຕົນເອງສາມາດຜະລິດພຽງພໍກັບການຂາຍແລ້ວ ມີຈຳນວນ 5 ຮ້ານ ກວມ 4.8%, ເຫດຜົນຜູ້ຂາຍຢ້ານຜົນຜະລິດກະສິກຳອິນຊີບໍ່ໄດ້ມາດຕະຖານ ມີ 3 ຮ້ານ ກວມ 2.9%, ເຫດຜົນທີ່ວ່າລາຄາຜົນຜະລິດກະສິກຳອິນຊີມີລາຄາແພງ ແມ່ນມີ 1 ຮ້ານ ກວມ 0.9%, ສຳຫຼັບຮ້ານທີ່ບໍ່ຕ້ອງການຊື້ ແຕ່ບໍ່ມີຄຳເຫັນແມ່ນມີ ຈຳນວນ 66 ຮ້ານກວມ 63.5%.

ຜົນການວິເຄາະຕາຕະລາງທີ 6 ຜູ້ສຶກສາຕ້ອງການວິເຄາະວ່າ ຮ້ານທີ່ຕ້ອງການຊື້ຜົນຜະລິດກະສິກຳອິນຊີໃນຈຳນວນ 76 ຮ້ານນັ້ນ ແມ່ນເປັນຮ້ານທີ່ຢູ່ຕະຫຼາດໃດ ຊຶ່ງເຫັນວ່າ ຢູ່ຕະຫຼາດໂພສີມີ 41 ຮ້ານ ກວມ 53.9% ແມ່ນມີຄວາມຕ້ອງການຊື້ຜົນຜະລິດກະສິກຳອິນຊີ, ຕະຫຼາດນາວຽງຄຳ ມີ 15 ຮ້ານກວມ 19.7% ແມ່ນມີຄວາມຕ້ອງການຊື້, ຕະຫຼາດປ່າຂາມມີ 13 ຮ້ານກວມ 17.1% ມີຄວາມຕ້ອງການຊື້ ແລະ ຕະຫຼາດຟອງສະຫວັນມີ 7 ຮ້ານກວມ 9.2%.

ຮ້ານທີ່ຕ້ອງການຊື້ຜົນຜະລິດກະສິກຳຈຳນວນ 76 ຮ້ານ ຊຶ່ງຜູ້ສຶກສາໄດ້ແຍກວ່າ ເປັນຮ້ານປະເພດແນວໃດ ຊຶ່ງຜົນການວິເຄາະພົບວ່າ ຮ້ານຂາຍຊີ້ນໝູ, ຊີ້ນງົວ ແລະ ຄວາຍ ມີຈຳນວນ 3 ຮ້ານ ກວມ 3.9%, ຮ້ານທີ່ຂາຍເປັດ-ໄກ່ມີຈຳນວນ 6 ຮ້ານກວມ 7.9%, ຮ້ານຂາຍປາ ແລະ ກົບ ແມ່ນມີຈຳນວນ 2 ຮ້ານ ກວມ 2.6% ແລະ ຮ້ານທີ່ຂາຍຜັກກາດ, ຜັກສະຫຼັດ, ຜັກບົ້ງ, ໝາກເຫຼັ່ນ ແລະ ຜັກຫອມ ແມ່ນມີ 65 ຮ້ານ ກວມ 85.5%.

ການວິເຄາະໃນຕາຕະລາງທີ 8 ແມ່ນຜູ້ສຶກສາຕ້ອງການຄຳນວນປະລິມານ, ລາຄາ ວ່າຜົນຜະລິດກະສິກຳອິນຊີແຕ່ລະຊະນິດນັ້ນທາງຮ້ານຕ້ອງການປະລິມານໂດຍສະເລ່ຍເທົ່າໃດຕໍ່ວັນ ພ້ອມທັງລາຄາທີ່ສາມາດຈັບຈ່າຍໄດ້ ຊຶ່ງສາມາດນຳເອົາຂໍ້ມູນນັ້ນມາຄຳນວນເປັນມູນຄ່າຂອງຜົນຜະລິດດັ່ງກ່າວ ຊຶ່ງຜົນການວິເຄາະພົບວ່າ:

- ຊີ້ນໝູທາງຮ້ານຕ້ອງການປະລິມານ 180 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 35,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 6,300,000 ກີບຕໍ່ວັນ;

- ຊີ້ນງົວທາງຮ້ານຕ້ອງການປະລິມານ 50 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 60,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 3,000,000 ກີບຕໍ່ວັນ;

- ໄກ່ທາງຮ້ານຕ້ອງການປະລິມານ 22 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 45,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 990,000 ກີບຕໍ່ວັນ;

- ເປັດທາງຮ້ານຕ້ອງການປະລິມານ 16 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 35,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 576,000 ກີບຕໍ່ວັນ;

- ປາທາງຮ້ານຕ້ອງການປະລິມານ 80 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 16,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 1,280,000 ກີບຕໍ່ວັນ

- ກົບທາງຮ້ານຕ້ອງການປະລິມານ 22 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 25,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 550,000 ກີບຕໍ່ວັນ;

- ປະເພດຜັກກາດຮ້ານຕ້ອງການປະລິມານ 618 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 6,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 3,708,000 ກີບຕໍ່ວັນ;

- ຜັກສະຫຼັດຮ້ານຕ້ອງການປະລິມານ 204 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 7,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 1,428,000 ກີບຕໍ່ວັນ;

- ປະເພດຜັກບົ້ງຮ້ານຕ້ອງການປະລິມານ 443 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 7,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 3,101,000 ກີບຕໍ່ວັນ;

- ໝາກເຜັ້ນຮ້ານຕ້ອງການປະລິມານ 70.6 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 8,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 564,800 ກີບຕໍ່ວັນ;

- ປະເພດຜັກຫອມຮ້ານຕ້ອງການປະລິມານ 62 ກິໂລກຣາມຕໍ່ມື້ ແລະ ຊື້ໃນລາຄາ 8,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 496,000 ກີບຕໍ່ວັນ. **ຄິດເປັນມູນຄ່າທັງໝົດຕໍ່ວັນ ແມ່ນ 21,993,800 ກີບຕໍ່ວັນ.**

## 4. ວິພາກຜົນ

ສະພາບການຜະລິດກະສິກຳສະອາດ ແລະ ກະສິກຳອິນຊີ ໃນແຂວງຫຼວງພະບາງ ນັບວ່າເປັນແຂວງໜຶ່ງທີ່ມີການລິເລີ່ມ ແລະ ໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງສາກົນ ແລະ ອຳນາດການປົກຄອງແຂວງຢ່າງໃກ້ສິດ ແຕ່ເຖິງຢ່າງໃດກໍຕາມ ຜະລິດຕະພັນຍັງບໍ່ທັນສາມາດສະໜອງຄວາມຕ້ອງ ແລະ ແຫຼ່ງການຜະລິດຍັງບໍ່ຊັດເຈນ, ການສຶກສາຄັ້ງນີ້ຈາກການສັງເກດ ແລະ ສອບຖາມເຫັນວ່າຍັງບໍ່ທັນມີການຢັ້ງຢືນເຖິງຄຸນນະພາບຂອງຜະລິດຕະພັນ ທີ່ສະອາດຕາມມາດຕະຖານທີ່ທາງກະຊວງກະສິກຳກຳນົດ ຫຼື ຍັງບໍ່ທັນມີກາໝາຍສິນຄ້າກະສິກຳອິນຊີ ເຖິງແມ່ນວ່າ ຈະມີນິຕິກຳກາໝາຍສິນຄ້າກະສິກຳອິນຊີ ທີ່ຢັ້ງຢືນຄຸນນະພາບກະສິກຳອິນຊີໃນ ສປປ ລາວ ແລະ ກາຈຳຢັ້ງຢືນມາດຕະຖານຂອງຜະລິດຕະພັນກະສິກຳອິນຊີຂອງ ສປປ ລາວ (Greennet, 2009).

ການເກັບກຳຂໍ້ມູນຂອງຂະແໜງການທີ່ກ່ຽວຂ້ອງໃນດ້ານການຜະລິດຍັງບໍ່ທັນໄດ້ດີ ເຊັ່ນ: ຈາກການລາຍງານຂອງພະແນກກະສິກຳ ປະຈຸບັນມີສະມາຊິກທີ່ຜະລິດກະສິກຳອິນຊີທັງໝົດ ມີຈຳນວນ 117 ຄອບຄົວ (ພະແນກກະສິກຳ ແຂວງ ຫຼວງພະບາງ, 2020) ແຕ່ຍັງຂາດຂໍ້ມູນສະມາຊິກແຕ່ລະຄອບຄົວມີ ການຜະລິດກະສິກຳຫຍັງແດ່, ຈຳນວນຈັກເຮັກຕາ ຍັງບໍ່ທັນເກັບກຳໄດ້ເຮັດໃຫ້ການວາງແຜນການຕະຫຼາດພົບຄວາມຍຸ້ງຍາກ. ນອກຈາກນັ້ນ, ຜະລິຕະພັນທີ່ຂາຍຕາມຕະຫຼາດກະ ສິກຳອິນຊີຢູ່ທີ່ສວນສາທາລະນະລ້ານຊ້າງ ແລະ ຕະຫຼາດນັດທີ່ເດີ່ນພະແນກກະສິກຳ ແລະ ປ່າໄມ້ຍັງເປັນເຄື່ອງປ່າຂອງດົງຫຼາຍກວ່າຜະລິດຕະພັນທີ່ໄດ້ຈາກການປູກ ແລະ ການລ້ຽງ ຖືວ່າຍັງບໍ່ທັນສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ ໂດຍສະເພາະ ແມ່ນພາກທຸລະກິດໂຮງແຮມ ແລະ ຮ້ານອາຫານ.

ອີງຕາມຜົນການວິເຄາະຈຸດປະສົງທີ່ (2) ພົບວ່າຮ້ານທີ່ຮັບຊື້ມາຈາກພໍ່ຄ້າ-ແມ່ຄ້າທີ່ສົ່ງເຖິງຮ້ານ ມີຈຳນວນ 97 ຮ້ານ ກວມ 53.9%, 36 ຮ້ານແມ່ນຮັບຊື້ມາຈາກພໍ່ຄ້າຂາຍສົ່ງທີ່ຕະຫຼາດໂພສີ ກວມ 20%, ຮ້ານຂາຍເຄື່ອງທີ່ໄປຊື້ຢູ່ຟາມຜູ້ຜະລິດ ຊຶ່ງເປັນຮ້ານຂາຍໄກ່ ແລະ ເປັດ ມີຈຳນວນ 2 ຮ້ານ ກວມ 1.1%, ຮ້ານຂາຍເຄື່ອງຜະລິດກະສິກຳ ທີ່ຜະລິດເອງມາຂາຍ ມີຈຳນວນ 35 ຮ້ານ ກວມ 19.4% ແລະ ຮ້ານທີ່ໄປຊື້ຢູ່ໂຮງຂ້າສັດ ຊຶ່ງເປັນຮ້ານຂາຍຊີ້ນ ເຊັ່ນ: ຊີ້ນໝູ, ຊີ້ນງົວ ແລະ ຊີ້ນຄວາຍມີຈຳນວນ 10 ຮ້ານ ກວມ 5.6%. ແຕ່ມີພຽງແຕ່ 76 ຮ້ານທີ່ຕ້ອງການຊື້ຜົນຜະລິດກະສິກຳອິນຊີ ຊຶ່ງກວມ 42.2%, ແລະ ມີ 104 ຮ້ານ ແມ່ນບໍ່ຕ້ອງການຊື້ ກວມ 57.8 ເປີເຊັນ ແລະ ຈຳນວນ 63.5 ເປີເຊັນບໍ່ທັນເຂົ້າໃຈ ຄວາມ ໝາຍ ແລະ ຄວາມສຳຄັນຂອງ ຜະລິດຕະພັນກະສິກຳອິນຊີ, ຈຳນວນ 27.9% ຕອບວ່າ ມີສາຂາປະຈຳຢູ່ແລ້ວ, ເຫດທີ່ຕົນເອງສາມາດຜະລິດເອງພຽງພໍແລ້ວ ມີຈຳນວນ 5 ຮ້ານ ກວມ 4.8%, ເຫດຜົນຜູ້ຂາຍຢ້ານຜົນຜະລິດກະສິກຳອິນຊີບໍ່ໄດ້

ມາດຕະຖານ ມີ 3 ຮ້ານ ກວມ 2.9%, ເຫດຜົນທີ່ວ່າ ລາຄາຜົນຜະລິດກະສິກຳອິນຊີມີລາຄາແພງ ແມ່ນມີ 1 ຮ້ານເທົ່ານັ້ນ. ສ່ວນປະລິມານ, ລາຄາ ແລະ ມູນຄ່າຜະລິດຕະພັນກະສິກຳອິນຊີທີ່ຮ້ານຕ້ອງການຊື້ຕໍ່ວັນ. ຊຶ່ງຊີ້ນໝູເປັນປະເພດຊີ້ນ ທີ່ທາງຮ້ານຕ້ອງຫຼາຍທີ່ສຸດ ໃນປະລິມານ 180 ກິໂລກຣາມຕໍ່ມື້ ແລະ ຕ້ອງການຊື້ໃນລາຄາ 35,000 ກີບຕໍ່ກິໂລກຣາມ, ຄິດເປັນມູນຄ່າ 6,300,000 ກີບຕໍ່ວັນ ແລະ ຜັກກາດເປັນປະເພດຜະລິດຕະພັນ ທີ່ຮ້ານຕ້ອງການຫຼາຍທີ່ສຸດ ໃນປະລິມານ 618 ກິໂລກຣາມຕໍ່ມື້ ແລະ ຕ້ອງການ ຊື້ໃນລາຄາ 6,000 ກີບຕໍ່ກິໂລກຣາມ.

## 5. ສະຫຼຸບຜົນ

ສາມາດສັງລວມຜົນຈາກການສຶກສາຄັ້ງນີ້ຕາມຈຸດປະສົງທີ່ຕັ້ງໄວ້ໃນເບື້ອງຕົ້ນສອງຈຸດປະສົງ ຄື: (1) ສະພາບລວມຜະລິດຕະພັນກະສິກຳອິນຊີໃນນະຄອນຫຼວງພະບາງ ແຂວງ ຫຼວງພະບາງ ແລະ (2) ຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີຈາກຮ້ານຄ້າ ໃນຕະຫຼາດເທດສະບານນະຄອນຫຼວງພະບາງ ສາມາດສະຫຼຸບໄດ້ດັ່ງນີ້:

ການຜະລິດກະສິກຳອິນຊີ ໃນແຂວງຫລວງພະບາງໃນເບື້ອງຕົ້ນໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງສາກົນ ແລະ ອຳນາດການປົກຄອງແຂວງຢ່າງໃກ້ສິດ ຈຶ່ງສາມາດເປີດຕະຫຼາດນັດ ກະສິກຳອິນຊີ ຢູ່ສອງຈຸດ ຄື: ຈຸດທີ່ໜຶ່ງ ຕັ້ງຢູ່ເດີ່ນພະແນກກະສິກຳ ແລະ ປ່າໄມ້ແຂວງຫຼວງພະບາງ ແລະ ຈຸດທີ່ສອງ ຈັດທີ່ເດີ່ນສວນສາທາລະນະລ້ານຊ້າງ ການຜະລິດຍັງບໍ່ທັນຫຼາກຫຼາຍ ແລະຍັງບໍ່ທັນມີກາໝາຍສິນຄ້າກະສິກຳອິນຊີ ເຖິງແມ່ນວ່າ ຈະມີນິຕິກຳ ກາໝາຍສິນຄ້າກະສິກຳອິນຊີ ທີ່ຢັ້ງຢືນຄຸນນະພາບກະສິກຳອິນຊີໃນ ສປປ ລາວ ແລ້ວ.

ຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີຂອງຮ້ານຄ້າຕາມກຸ່ມຕົວຢ່າງແມ່ນມີແຕ່ 42.2%, ໃນນັ້ນຮ້ານຂາຍຊີ້ນຕ້ອງການຊີ້ນໝູຫຼາຍທີ່ສຸດໃນປະລິມານ 180 ກິໂລກຣາມຕໍ່ມື້, ຮອງລົງມາແມ່ນຊີ້ນງົວ, ໄກ່, ເປັດ, ປາ ແລະ ກົບ. ສ່ວນປະເພດຜັກ ແມ່ນຜັກກາດຫຼາຍທີ່ສຸດໃນປະລິມານ 618 ກິໂລກຣາມຕໍ່ມື້, ຮອງມາແມ່ນຜັກບົ້ງ, ຜັກສະລັດ, ໝາກເລັ່ນ ແລະ ປະເພດເຄື່ອງຫອມ.

ຂໍ້ແນະນຳໃນການວິໄຈຄັ້ງຕໍ່ໄປ

ການສຶກສາໃນຄັ້ງຕໍ່ຄວນຈະສຶກສາຄວາມຕ້ອງການດ້ານຜະລິດຕະພັນກະສິກຳອິນຊີຈາກໂຮງແຮມ, ຮ້ານອາຫານ ແລະ ຄົວເຮືອນ ເພື່ອທີ່ຈະຮັບຮູ້ປະລິມານຄວາມຕ້ອງການທີ່ຈະເປັນຕະຫຼາດທີ່ມີກຳລັງໃນການຊື້ເພື່ອສະໜອງການທ່ອງທ່ຽວທີ່ເປັນລາຍຮັບຫຼັກຂອງ ແຂວງ ຫຼວງພະບາງ.

## 6. ເອກະສານອ້າງອີງ


ກະຊວງກະສິກຳ ແລະ ປ່າໄມ້ .(2011). ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ວ່າດ້ວຍໃາດຕະຖານກະສິກຳອິນຊີ ເລກທີ 1666/ປຝ.ກປ, ນະຄອນຫຼວງວຽງຈັນ, ລົງວັນທີ 30 ທັນວາ 2005;

ພະແນກກະສິກຳ ແລະ ປ່າໄມ້ ແຂວງຫລວງພະບາງ . (2020). ປື້ມຄູ່ມືການດຳເນີນງານ ສຳຫຼັບກຸ່ມປູກຜັກອິນຊີໃຫ້ໄດ້ມາດຕະຖານກະສິກຳອິນຊີ ຂອງ ສປປ ລາວ;

ຊິດທະໄທ ເພັດຊ່ວຍ .(2017). ສະຖານະການ ການໃຊ້ສານເຄມີການກະເສດ ບໍລິເວນອານຸພາກພື້ນແມ່ນ້ຳຂອງ, ວາລະ ສານ ແລະ ເທັກໂນໂລຊີ ມະຫາວິທະຍາໄລ ອຸບົນຣາດຊະທານີ 19 (1);

ອຸໄທ ສຸກຂີ, ແກ້ວອຸດອນ ເພັດຊົມພູ, ສີວິໄລ ອິນທະລີໄຊ, ສິນທະໄລ ນິນນາໂສພາ, ແສງມາແລງ ວິພົງໄຊ ແລະ ດາລາເພັດ ສຸກຂີ (2017) ການຮຽນຮູ້ຮ່ວມກັນ ກ່ຽວກັບການຜະລິດເຂົ້າກະສິກຳອິນຊີ ຂອງຊາວກະສິກອນ ໃນເມືອງ ໄຊບູລີ ແຂວງສະຫວັນນະເຂດ.

Abraham Maslow. (1943). Hierarchy of Needs theory and its applicability in management of Youth work programmes;

Annunziata. A & Vecchio. R. (2015). Organic farming and sustainability in food choices: an analysis of consumer preference in Southern Italy. Agriculture and Agricultural Science Procedia 8, 193 – 200

Goodwin, H. (2008). TOURISM, LOCAL ECONOMIC DEVELOPMENT, AND POVERTY REDUCTION. Applied Research in Economic Development, 5(3). Retrieved on June 6, 2020, from www.academia.edu

Tsakiridon, E, Boutsouki, C. Zotos, Y. and Mattas. K .(2007). Attitudes and behavior towards organic products: an exploratory Study, International Journal of Retail & Distribution Management. 36 (2).

ຕາຕະລາງທີ 1: ສະແດງເຖິງຮ້ານທີ່ຊື້ມາຂາຍ ແລະ ຜະລິດຂາຍເອງ.

| ລ/ດ | ຮ້ານ | ຈຳນວນ | ຄິດໄລ່ເປັນເປີເຊັນ (%) |
|---|---|---|---|
| 1 | ຮ້ານທີ່ຊື້ມາຂາຍ | 145 | 80.6 |
| 2 | ຮ້ານທີ່ບໍ່ໄດ້ຊື້ມາຂາຍ (ຜະລິດເອງ) | 35 | 19.4 |
| **ລວມ:** | | **180** | **100** |

ແຫຼ່ງທີ່ມາ: ໄດ້ຈາກການຄຳນວນ.

ຕາຕະລາງທີ 2: ສະແດງເຖິງແຫຼ່ງທີ່ມາຂອງຜົນຜະລິດກະສິກຳຂອງຮ້ານໃນຕະຫຼາດນະຄອນຫຼວງພະບາງ.

| ລ/ດ | ແຫຼ່ງທີ່ມາຂອງຜົນຜະລິດ | ຈຳນວນ | ຄິດໄລ່ເປັນເປີເຊັນ (%) |
|---|---|---|---|
| 1 | ຊື້ມາຈາກຕະຫຼາດໂພສີ | 36 | 20 |
| 2 | ພໍ່ຄ້າ-ແມ່ຂ້າສົ່ງເຖິງຮ້ານ | 97 | 53.9 |
| 3 | ຊື້ຢູ່ຟາມຜະລິດ | 2 | 1.1 |
| 4 | ຜະລິດເອງມາຂາຍ | 35 | 19.4 |
| 5 | ຊື້ຢູ່ໂຮງຂ້າສັດ | 10 | 5.6 |
| **ລວມ:** | | **180** | **100** |

ຕາຕະລາງທີ 3: ສະແດງເຖິງຮ້ານທີ່ສົນໃຈຜົນຜະລິດກະສິກຳອິນຊີໃນຕະຫຼາດນະຄອນຫຼວງພະບາງ.

| ລ/ດ | ຄວາມສົນໃຈຕໍ່ຜົນຜະລິດກະສິກຳອິນຊີ | ຈຳນວນ | ຄິດໄລ່ເປັນເປີເຊັນ (%) |
|---|---|---|---|
| 1 | ຮ້ານທີ່ສົນໃຈ | 76 | 42.2 |
| 2 | ຮ້ານບໍ່ສົນໃຈ | 104 | 57.8 |
| **ລວມ:** | | **180** | **100** |

ແຫຼ່ງທີ່ມາ: ໄດ້ຈາກການຄຳນວນ.

ຕາຕະລາງທີ 4: ສະແດງເຖິງຮ້ານທີ່ຕ້ອງການຊື້ຜົນຜະລິດກະສິກຳອິນຊີໃນຕະຫຼາດນະຄອນຫຼວງພະບາງ.

| ລ/ດ | ຜົນຜະລິດກະສິກຳອິນຊີ | ຈຳນວນ | ຄິດໄລ່ເປັນເປີເຊັນ (%) |
|---|---|---|---|
| 1 | ຕ້ອງການຊື້ | 76 | 42.2 |
| 2 | ບໍ່ຕ້ອງການຊື້ | 104 | 57.8 |
| **ລວມ:** | | **180** | **100** |

ແຫຼ່ງທີ່ມາ: ໄດ້ຈາກການຄຳນວນ.

ຕາຕະລາງທີ 5: ເຫດຜົນຂອງຮ້ານທີ່ບໍ່ຕ້ອງການຊື້ຜົນຜະລິດກະສິກຳອິນຊີໃນຕະຫຼາດນະຄອນຫຼວງພະບາງ.

| ລ/ດ | ເຫດຜົນ | ຈຳນວນ | ຄິດໄລ່ເປັນເປີເຊັນ (%) |
|---|---|---|---|
| 1 | ມີສາຂາມາສົ່ງເປັນປະຈຳ | 29 | 27.9 |
| 2 | ສາມາດຜະລິດເອງທີ່ພຽງພໍການຂາຍ | 5 | 4.8 |
| 3 | ຜະລິດຕະພັນອິນຊີບໍ່ໄດ້ມາດຖານ | 3 | 2.9 |
| 4 | ລາຄາແພງ | 1 | 0.9 |
| 5 | ບໍ່ໄດ້ມີຄຳເຫັນ | 66 | 63.5 |
| **ລວມ:** | | **104** | **100** |

ແຫຼ່ງທີ່ມາ: ໄດ້ຈາກການຄຳນວນ.

ຕາຕະລາງທີ 6: ຮ້ານຕ້ອງການຊື້ຜົນຜະລິດກະສິກຳອິນຊີໃນຕະຫຼາດນະຄອນຫຼວງພະບາງ ແຍກຕາມຕະຫຼາດ

.

| ລ/ດ | ຮ້ານທີ່ຕ້ອງການຊື້ແຍກຕາມຕະຫຼາດ | ຈຳນວນ | ຄິດໄລ່ເປັນເປີເຊັນ (%) |
|---|---|---|---|
| 1 | ຕະຫຼາດໂພສີ | 41 | 53.9 |
| 2 | ຕະຫຼາດນາວຽງຄຳ | 15 | 19.7 |
| 3 | ຕະຫຼາດປ່າຂາມ | 13 | 17.1 |
| 4 | ຕະຫຼາດຟອງສະຫວັນ | 7 | 9.2 |
| **ລວມ:** | | **76** | **100** |

ແຫຼ່ງທີມາ: ໄດ້ຈາກການຄຳນວນ.

ຕາຕະລາງທີ 7: ຮ້ານຕ້ອງການຊື້ຜົນຜະລິດກະສິກຳອິນຊີໃນຕະຫຼາດນະຄອນຫຼວງພະບາງ ແຍກຕາມປະເພດຮ້ານ.

| ລ/ດ | ຄວາມຕ້ອງການຊື້ແຍກຕາມຮ້ານ | ຈຳນວນ | ຄິດໄລ່ເປັນເປີເຊັນ (%) |
|---|---|---|---|
| 1 | ຊີ້ນ: ໝູ, ງົວ, ຄວາຍ | 3 | 3.9 |
| 2 | ເປັດ, ໄກ່ | 6 | 7.9 |
| 3 | ປາ, ກົບ | 2 | 2.6 |
| 4 | ຜັກ: ຜັກກາດ, ຜັກສະລັດ, ຜັກບົ້ງ, ໝາກເຫຼັ່ນ, ຜັກອື່ນໆ... | 65 | 85.5 |
| **ລວມ:** | | **76** | **100** |

ແຫຼ່ງທີ່ມາ: ໄດ້ຈາກການຄຳນວນ.

ຕາຕະລາງທີ 8: ເຖິງປະລິມານ, ລາຄາ ແລະ ມູນຄ່າຜະລິດຕະພັນກະສິກຳອິນຊີທີ່ຮ້ານຕ້ອງການຊື້ຕໍ່ວັນ.

| ປະເພດຮ້ານ | ຜົນຜະລິດທີ່ຕ້ອງການຊື້ | ຈຳນວນ (kg) | ລາຄາ (ກີບ) | ຄິດເປັນມູນຄ່າ |
|---|---|---|---|---|
| ຂາຍຊີ້ນ | ໝູ | 180 | 35,000 | 6,300,000 |
| | ງົວ | 50 | 60,000 | 3,000,000 |
| ເປັດ-ໄກ່ | ໄກ່ | 22 | 45,000 | 990,000 |
| | ເປັດ | 16 | 36,000 | 576,000 |
| ປາ-ກົບ | ປາ | 80 | 16,000 | 1,280,000 |
| | ກົບ | 22 | 25,000 | 550,000 |
| ຜັກ | ປະເພດຜັກກາດ | 618 | 6,000 | 3,708,000 |
| | ຜັກບົ້ງ | 443 | 7,000 | 3,101,000 |
| | ຜັກສະຫຼັດ | 204 | 7,000 | 1,428,000 |
| | ໝາກເຫຼັ່ນ | 70.6 | 8,000 | 564,800 |
| | ຜັກອື່ນໆ(ປະເພດຜັກຫອມ) | 62 | 8,000 | 496,000 |
| **ລວມ:** | | | | **21,993,800** |

ແຫຼ່ງທີ່ມາ: ໄດ້ຈາກການຄຳນວນ.